**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 118 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 04 AUG 2025

# ແຈ້ງການ

ເຖິງ: ຜູ້ທີ່ສົນໃຈຕ້ອງການສະໝັກສອບເສັງລະດັບຊາດສຳລັບທ່ານໝໍຄັ້ງທີ 5

ເລື່ອງ: ຂັ້ນຕອນການສະໝັກສອບເສັງລະດັບຊາດສຳລັບທ່ານໝໍຄັ້ງທີ 5

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດຈັດຕັ້ງການສອບເສັງລະດັບຊາດສຳລັບວິຊາຊີບທ່ານໝໍ ເລກທີ 1833/ສທ, ລົງວັນທີ 23 ກໍລະກົດ 2025;

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບສາທາ ລະນະສຸກຈະຈັດການສອບເສັງລະດັບຊາດສຳລັບທ່ານໝໍຄັ້ງທີ 5, ຊຶ່ງຈະຈັດຂຶ້ນວັນທີ 25 ຫາ 26 ກັນຍາ 2025 ທີ່ ວິທະຍາເຂດດົງໂດສີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ. ດັ່ງນັ້ນ, ຈຶ່ງຂໍແຈ້ງໃຫ້ທ່ານໝໍຈົບໃໝ່ປີ 2025. ທັງພາຍໃນ, ຕ່າງປະເທດ, ຜູ້ທີ່ບໍ່ທັນໄດ້ສອບເສັງ ແລະ ຜູ້ສອບເສັງບໍ່ຜ່ານ, ທີ່ຮຽນຈົບຫຼັງປີ 2020 ເປັນຕົ້ນມາ ມາໃຫ້ມາລົງທະບຽນ ແລະ ເຂົ້າຮ່ວມການສອບເສັງຕາມວັນເວລາ ແລະ ສະຖານທີ່ທີ່ກຳນົດໄວ້ ໃຫ້ສະໝັກສອບເສັງຊຶ່ງມີລາຍລະອຽດດັ່ງນີ້:

1. ຮັບແບບຟອມຄຳຮ້ອງສະໝັກສອບເສັງທາງອອນລາຍໄດ້ທີ່:https://hpc.gov.la/la/doctor/examination ຫຼື ທີ່ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1 (ໃນຮົ້ວກະຊວງສາທາລະນະສຸກຕຶກໃໝ່);
2. ຜູ້ທີ່ສະໝັກສອບເສັງຈະຕ້ອງຂຽນຟອມສະໝັກສອບເສັງ ແລະ ລົງທຽນບຽນທາງອອນລາຍຜ່ານ QRcode ທີ່ມີຢູ່ທ້າຍແບບຟອມ (ຖ້າບໍ່ລົງທະບຽນອອນລາຍຈະບໍ່ມີລາຍຊື່ສອບເສັງ);
3. ສົ່ງຟອມຄຳຮ້ອງສະໝັກສອບເສັງໄດ້ທີ່ ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກຊັ້ນ 1 (ໃນຮົ້ວກະຊວງສາທາລະ ນະສຸກຕຶກໃໝ່) ແຕ່ວັນທີ 11 ສິງຫາ 2025 ຫາ 29 ສິງຫາ 2025;
4. ຮັບບັດເຂົ້າຫ້ອງສອບເສັງແຕ່ວັນທີ 08 ຫາ 12 ກັນຍາ 2025 ທີ່ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1
5. ຄ່າລົງທະບຽນສະໝັກສອບເສັງແມ່ນ 350,000 ກີບ/ຄົນ ຊຶ່ງຈະຕ້ອງຈ່າຍຕອນທີ່ສົ່ງຟອມຄຳຮ້ອງສະໝັກສອບເສັງ;

6. ກ່ອນມື້ສອບເສັງຕ້ອງກຽມອຸປະກອນຮັບໃຊ້ຢ່າງພຽງພໍ ເຊັ່ນ: ສໍດຳ 2B, ຢາງລຶບ ແລະ ອຸປະກອນແຫຼມສໍ.

ເຊັນແທນ ປະທານ

ສຈ ດຣ ຈັນເພັງ ທຳມະວົງ

<u>ຕິດຕໍ່ປະສານງານ ໂທ ແລະ ວອດແອັບ:</u>

| | |
|---|---|
| ເລກາ ສີດາວົງ | 5500 8875 |
| ບຸນປະສິດ ຄຳກອງ | 5986 8071 |
| ຕົ້ນ ບຸຜາ | 9539 6733 |